ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 215 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 31 ຕຸລາ 2018

## ໜັງສືເຊີນ

## ເຂົ້າປະມູນສົມທຽບລາຄາການສະໜອງອຸປະກອນ ໄອທີ (ຄອມພິວເຕີ, ປີ້ນເຕີ ແລະ ອື່ນໆ) ໃຫ້ທະນາຄານແຫ່ງ ສປປ ລາວ ປະຈຳປີ 2019.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 06/ທຫລ, ລົງວັນທີ 25 ມີນາ 2005;
- ອີງຕາມ ລະບຽບການຈັດຕັ້ງປະຕິບັດດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງສ້ອມແປງ ແລະ ການບໍລິຫານດ້ວຍທຶນຂອງທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 919/ທຫລ, ລົງວັນທີ 23 ຕຸລາ 2013.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງບັນດາ ບໍລິສັດ ແລະ ຮ້ານ ທີ່ສົນໃຈເຂົ້າຮ່ວມປະກວດລາຄາເພື່ອຄັດເລືອກໃຫ້ເປັນຜູ້ສະໜອງອຸປະກອນໄອທີ (ຄອມພິວເຕີ, ປີ້ນເຕີ ແລະ ອື່ນ)ໃຫ້ທະນາຄານແຫ່ງ ສປປ ລາວ ປະຈຳປີ 2019, ໂດຍສາມາດພົວພັນຊອບຖາມຂໍ້ມູນ ແລະ ຂໍຊື້ຊອງປະມູນໄດ້ ກັບພະແນກບໍລິຫານ ຫ້ອງການທະນາຄານແຫ່ງ ສປປ ລາວ ໃນວັນທີ 31/10/2016 - 6/11/2018. (ໝາຍເລກໂທລະສັບຕິດຕໍ່ພົວພັນ 021 241 268).

ດັ່ງນັ້ນ, ຈິ່ງແຈ້ງມາຍັງບັນດາທ່ານ ທີ່ສົນໃຈເຂົ້າຮ່ວມການປະມູນ.

ຮ. ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ສຸກັນ ຈັນທະວົງ